ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຫ້ອງສະໝຸດທະນາຄານແຫ່ງ ສປປ ລາວ ເດີນທາງເກັບກຳຂໍ້ມູນວັດຖຸພັນເກົ່າ



ຫ້ອງສະໝຸດທະນາຄານແຫ່ງ ສປປ ລາວ ເດີນທາງຖອດຖອນບົດຮຽນກ່ຽວກັບຫ້ອງສະໝຸດ ແລະ ຫໍພິພິທະພັນ ແລະ ເກັບກຳຂໍ້ມູນກ່ຽວກັບວັດຖຸພັນເກົ່າຂອງແຂວງ ຈຳປາສັກ ແລະ ແຂວງ ສະຫວັນນະເຂດໃນລະຫວ່າງວັນທີ 05-10 ກຸມພາ 2018 ເພື່ອກະກຽມວາງສະແດງວັດຖຸພັນໃນໂອກາດການສະເຫຼີມສະຫຼອງວັນສ້າງຕັ້ງທະນາຄານແຫ່ງສປປລາວຄົບຮອບ 50 ປີ (07 ຕຸລາ 1968-07 ຕຸລາ 2018) ເຊິ່ງນຳໂດຍທ່ານ ພູວຽງ ແສງດາວົງ ຮອງຫົວໜ້າຫ້ອງການທະນາຄານແຫ່ງສປປ ລາວ ພ້ອມທັງພະນັກງານພະແນກຫ້ອງສະໝຸດ ແລະ ຫໍພິພິທະພັນ.





ຄະນະດັ່ງກ່າວຍັງໄດ້ເຂົ້າຖອດຖອນບົດຮຽນຈາກຫ້ອງສະຫມຸດວິທະຍາໄລການເງິນພາກໃຕ້ແຂວງຈຳປາສັກ, ຫ້ອງສະຫມຸດວິທະຍາໄລຄູປາກເຊ ແລະ ຫໍພິພິທະພັນມູນເຊື້ອປະຫວັດສາດແຂວງຈຳປາສັກ. ຫລັງຈາກນັ້ນ, ທາງຄະນະກໍໄດ້ເດີນທາງໄປສຶກສາການວາງສະແດງກະດູກໄດໂນເສົາທີ່ຫໍພິພິທະພັນໄດໂນເສົາ ແລະ ຢ້ຽມຊົມຫ້ອງສະໝຸດວິທະຍາໄລຄູແຂວງສະຫວັນນະເຂດ, ເຊິ່ງໃນນັ້ນຍັງໄດ້ພົບເຫັນປຶ້ມທີ່ມີປະໂຫຍດໃນການບໍລິຫານຈັດການຫ້ອງສະໝຸດ ແລະ ປຶ້ມອື່ນໆອີກຈຳນວນຫນຶ່ງ.




# ຂ່າວ ແລະ ພາບໂດຍ: ນາງ ປາໄນ ພັນທະລາ

# ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ